# ສັລເສີນນ້ຳໃຈແມ່ສີພັນດອນ

ຂໍຝາກກອນນີ້ໃຫ້ ນ້ຳໃຈແມ່...ສີພັນດອນ
ຈື່ງອາວອນໃນດວງຈິດ ຄິດໄຄ່ຄວນຄຳເວົ້າ
ຂໍເອົາກອນວອນເອີ້ນ ສັລເສີນໃນວັນແມ່
ອອກຈາກໃຈອ້າຍທ່ຽງແທ້ ບໍ່ແປເຣື່ອງແຕ່ງຄວາມ ແທ້ໃດ

ດອນເປັນ ແມ່ທີ່ດີເລີດລ້ຳ ງົດງາມຍິ່ງທາງໃຈ ຈິງແລ້ວ
ຢາດເຫື່ອໄຫຼຍອມທົນ ສູ້ຜ່າຟັນຫານຫ້າວ
ສັຕຣີລາວຍຶດຖືແຫນ້ນ ບໍ່ຄອນແຄນໃຫ້ເສັ່ງທ່າ
ບ້າງຄັ້ງ ຕ້ອງທົນຝືນກືນນ້ຳຕາ ພາຫົວໃຈທົດທໍ້ ພໍຢາກມ້ວຍເມື່ອຍໃຈ

ແຕ່ວ່າດອນກໍພອຍຄຶດໄດ້ ສັກສີໃຫຍ່ເຄີຍເປັນຄຣູ
ສູ້ເພື່ອບຸຕທັງສາມ ໃຫ້ຊ່ຳຊາຍຢ່າງຫານຫ້າວ
ບາງຄັ້ງເຫງົາໃຈກັ້ນ ຈຸດສຳຄັນ ຕ້ອງສູ້ຕໍ່
ເປັນທັງແມ່ເປັນທັງພໍ່ ເປັນທັງຄຣູຜູ່ສັ່ງຊີ້ ຄວາມດີໄວ້ໃຫ້ລູກເຫັນ

ສັ່ງສອນລູກໃຫ້ລະເວັ້ນ ເປັນຄົນຖ່ອຍໃນສັງຄົມ
ໃຫ້ສະສົມຄວາມດີ ຈຶ່ງມາກມີຄົນຍໍຍ້ອງ
ຢ່າຈອງຫອງພອງດີ້ ນັບຖືຄຸນຂອງພໍ່ແມ່
ຮູ້ຈັກເຖົ້າຈັກແກ່ ກັບທັງລຸງແລະປ້າ ອາວອານັ້ນ ໃຫ້ຍົກສູງ

ຄວາມອົດທົນມາດມຸ້ງ ດອນເປັນໜຶ່ງທາງປະພຶດ
ຍຶດຖືໃນສັກສີ ແມ່ທີ່ດີ ເອົາໄວ້
ກຳລັງໃຈເປັນຈຸດຕັ້ງ ເອົາແຮງກາຍເປັນທຶນຕໍ່

ຄິດເຫັນຄຳສອນພໍ່ ລົ້ມແລ້ວລຸກໃຫ້ຟື້ນ ຢືນຫນຽວຫມັ້ນຢ່າຖອຍ

ດອນບໍ່ເຄີຍດ່າງພ້ອຍ ດ້ອຍຫນ້າລື່ນຍິງຄືນໃດ
ມີນ້ຳໃຈທີ່ໃສງາມ ປະເສີດສີໃສແຈ້ງ
ເປັນແວ່ນແຍງສເມີດ້ານ ລູກທັງສາມກໍຊິມຊື່ນ
ທົນຫວານອົມຂົມກືນ ຈຸດຢືນດອນທ່ຽງຫມັ້ນ ໃຫ້ຝັນກ້າວອ່າວໄກ

ຂໍສິ່ງພອນນີ້ໃຫ້ ໃນວັນແມ່ຈິ່ງມີສຸຂ
ສິ່ງໃດເປັນຄວາມທຸກ ເອົ້າອັ່ງອຸກຢ່າມາໃກ້
ໃຫ້ມີໃຈດີສົດຊື່ນ ຄືຄືນເພັງສິບຫ້າຄ່ຳ
ພົບແຕ່ຄວາມສວຍງາມ ລູກທັງສາມໃຫ້ຫໍ່ຫຸ້ມ ຕອມຕຸ້ມແລະເທີດທູນ

ໃຫ້ມີສຸຂເລີດລົ້ນ ຈິ່ງພົ້ນຜ່ານຄວາມຫາງອຍເທີງາ
ອ້າຍຂໍເອົາຄຳກອນ ສິ່ງແທນຂອງຂວັນນ້ອງ
ຢ່າມີແນວຄາຂ້ອງ ຫມອງໃຈໃນວັນແມ່
ສຸຂສົມຫວັງທ່ຽງແທ້ ຢ່າແປປິ້ນປ່ຽນສລາຍ ສາທຸ